# LAO PDR RATIFIED KEY UN TREATIES



The Lao PDR has made a huge stride in the advancement of the international and national rule of law by ratifying three among the most important treaties of the United Nations. The Lao Deputy Prime Minister and Minister of Foreign Affairs, Dr. Thongloun Sisoulith, on Friday 25 September 2009, participated in the annual UN Treaty Event held at the UN Headquarters in New York and deposited instruments of ratification for the International Covenant on Civil and Political Rights, the UN Convention Against Corruption, and the Convention on the Rights of Persons with Disabilities.

The ratification of the International Covenant on Civil and Political Rights and the Convention on the Rights of Persons with Disabilities indicates the good willingness and firm determination of the Lao PDR to cooperate with the international community to further promote and protect human rights, including the rights of persons with disabilities. Ratifying the two human rights instruments, Lao PDR is now a State party to 6 out of the 9 core UN treaties in the field of human rights. The country is already a State party to the International Covenant on Economic, Social and Cultural Rights, the Convention on the Elimination of All Forms of Racial Discrimination, the Convention on the Elimination of All Forms of Discrimination Against Women and the Convention on the Rights of the Child, as well as the latter's two Optional Protocols.

The ratification of the UN Convention Against Corruption is a firm step undertaken by the country to cooperate with the international community to fight against corruption through effective prevention, criminalization, international cooperation and asset recovery. Lao PDR has already enacted law on anti-corruption which together with the criminal law and other related laws and decrees constitutes a national legal basis for the implementation of the ratified Convention Against Corruption at the national level.

The United Nations organizes an annual treaty event since the Millennium Summit in 2000. The UN treaty event takes place in New York, coinciding with the yearly session of the UN General Assembly. At the treaty event last year, Lao PDR signed one treaty and deposited instruments of accession to two treaties.

# ສປປ ລາວ ໃຫ້ສັດຕະຍາບັນແກ່ສົນທິສັນຍາອົງການສະຫະປະຊາຊາດ

ໃນວັນທີ 25 ກັນຍາ 2009, ທ່ານ ດຣ ທອງລຸນ ສີສຸລິດ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີວ່າການກະຊວງການ ຕ່າງປະເທດ ໄດ້ເຂົ້າຮ່ວມພິທີລົງນາມ ແລະ ເຂົ້າຮ່ວມເປັນພາຄີ ສົນທິສັນຍາ ຂອງອົງການ ສປຊ ຊຶ່ງຈັດຂຶ້ນຢູ່ ສຳນັກງານ ໃຫຍ່ ສປຊ ທີ່ ນີວຢອກ ໂດຍໄດ້ຕາງໜ້າ ລັດຖະບານແຫ່ງ ສປປລາວ ຍື່ນສານສັດຕະຍາບັນ ສໍາລັບສົນທິສັນຍາວ່າດ້ວຍສິດທາງດ້ານການເມືອງ ແລະ ສິດພົນລະເມືອງ, ສົນທິສັນຍາສະຫະປະຊາຊາດວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ແລະ ສົນທິສັນຍາວ່າດ້ວຍສິດທິ ຄົນພິການ, ພ້ອມທັງຍື່ນສານສ້າງຂໍ້ສະຫງວນ ແລະ ສານສ້າງ ຂໍ້ຖະແຫຼງກ່ຽວກັບບາງມາດຕາຂອງສົນທິສັນຍາເຫຼົ່ານີ້. ລັດຖະບານລາວໄດ້ລົງນາມສົນທິສັນຍາ ສາມ ສະບັບທີ່ກ່າວນີ້ ໃນປີ 2000, 2003 ແລະ 2008 ຕາມລຳດັບ. ພາຍຫລັງການລົງນາມ, ສປປລາວໄດ້ກະກຽມຄວາມພ້ອມເພື່ອການໃຫ້ສັດຕະຍາບັນ ແລະ ການຈັດຕັ້ງປະຕິບັດສຳລັບ ແຕ່ລະສົນທິສັນຍາ ແລະ ມາຮອດເດືອນກໍລະກົດ 20 09 ຄະນະປະຈຳສະພາແຫ່ງຊາດ ໄດ້ພິຈາລະນາ ແລະ ຕົກລົງໃຫ້ສັດຕະຍາບັນແກ່ສົນທິສັນຍາວ່າດ້ວຍສິດທາງດ້ານການເມືອງ ແລະ ສິດພົນລະເມືອງ ແລະ ໃນເດືອນກັນຍາ 2009 ໄດ້ພິຈາລະນາ ແລະ ຕົກລົງໃຫ້ສັດຕະຍາບັນແກ່ສົນທິສັນຍາ ສປຊ ວ່າດ້ວຍການຕ້ານການສໍ້ລາດບັງຫລວງ ແລະ ສົນທິສັນຍາວ່າດ້ວຍສິດທິຄົນພິກາ ນ. ໃນການໃຫ້ສັດຕະຍາບັນ, ສປປລາວໄດ້ເຮັດຄຳຖະ ແຫລງກ່ຽວກັບມາດຕາ 1, ມາດຕາ 18 ແລະ ເຮັດຂໍ້ສະຫງວນກ່ຽວກັບມາດຕາ 22 ຂອງສົນທິສັນຍາສາກົນວ່າດ້ວຍສິດທາງດ້ານການເມືອງ ແລະ ສິດ ພົນລະເມືອງ. ສປປລາວຍັງໄດ້ເຮັດຂໍ້ສະຫງວນກ່ຽວກັບມາດຕາ 46 ແລະ ມາດຕາ 66 ຂອງສົນທິສັນຍາ ສປຊ ເພື່ອຕ້ານການສໍ້ລາດບັງຫລວງ.

ການໃຫ້ສັດຕະຍາບັນແກ່ສົນທິສັນຍາວ່າ ດ້ວຍສິດທາງດ້ານການເມືອງ ແລະ ສິດ ພົນລະເມືອງ ແລະສົນທິສັນຍາວ່າດ້ວຍສິດທິຂອງຄົນພິການ ນັ້ນສະແດງໃຫ້ເຫັນເຖິງມານະຈິດທາງການເມືອງອັນຕັ້ງໜ້າ ຂອງ ສປປ ລາວ ໃນຖານະເປັນສະມາຊິກອົງການສະຫະປະຊາຊາດ ໃນການຮ່ວມມືກັບວົງຄະນາຍາດສາກົນເພື່ອສົ່ງເສີມ ແລະ ປົກປ້ອງສິດທິມະນຸດ, ລວມທັງສິດທິຂອງຄົນພິການ. ມາຮອດປະຈຸບັນ, ສປປ ລາວ ເປັນພາຄີສົນທິສັນຍາ 6 ສະບັບ ໃນຈຳນວນສົນທິສັນຍາຫລັກດ້ານສິດທິມະນຸດຂອງ ສປຊ ທັງໝົດ 9 ສະບັບ. ສົນທິສັນຍາທີ່ ສປປລາວເປັນພາຄີຜ່ານມາແລ້ວລວມມີສົນທິສັນຍາວ່າດ້ວຍສິດ ທາງດ້ານເສດຖະກິດ, ສັງຄົມ ແລະວັດທະນະທຳ, ສົນທິສັນຍາວ່າດ້ວຍການລົບລ້າງທຸກຮູບແບບການຈຳແນກເຊື້ອຊາດ, ສົນທິສັນຍາວ່າ ດ້ວຍການລົບລ້າງທຸກຮູບການຈຳແນກຕໍ່ແມ່ຍິງ, ສົນທິສັນຍາວ່າດ້ວຍສິດທິເດັກ ແລະອານຸສັນຍາສອງສະບັບຂອງສົນທິສັນຍາສິດທິເດັກ. ນອກນີ້, ສປປ ລາວ ຍັງໄດ້ລົງນາມສົນທິສັນຍາ ວ່າດ້ວຍການປົກປ້ອງທຸກຄົນຈາກການຫາຍສາ ບສູນແບບບັງຄັບ.

ການໃຫ້ສັດຕະຍາບັນແກ່ສົນທິສັນຍາ ສປຊ ວ່າດ້ວຍການຕ້ານການສໍ້ລາດບັງ ຫຼວງ ແມ່ນບາດກ້າວອັນໜັກແໜ້ນຂອງ ສປປລາວ ໃນການຮ່ວມມືກັບວົງຄະນາຍາດສາກົນເພື່ອຕໍ່ສູ້ຕ້ານສໍ້ລາດບັງຫຼວງຢູ່ໃນແຕ້ລະປະເທດພາຄີ ແລະ ໃນໂລກ. ຜ່ານມາ, ສະພາແຫ່ງຊາດ ໄດ້ຮັບຮອງ

ເອົາກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ເຊິ່ງຄຽງຄູ່ກັບກົດໝາຍອາຍາ ແລະ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງຕ່າງໆໄດ້ເປັນພື້ນຖານທາງດ້ານກົດໝາຍອັນໜັກແໜ້ນ ສຳລັບການຈັດຕັ້ງປະຕິບັດສົນທິ ສັນຍາສະຫະປະຊາຊາດເພື່ອຕ້ານການສໍ້ລາດບັງຫລວງ.

ອີງການສະຫະປະຊາຊາດຈັດຕັ້ງພິທີລົງນາມ ແລະ ເຂົ້າຮ່ວມເປັນພາຄີສົນທິສັນຍາສາກົນໃນແຕ່ລະປີນັບ ແຕ່ກອງປະຊຸມສຸດຍອດສະຫັດສະວັດປີ 2000 ເປັນຕົ້ນມາເຊິ່ງຈັດຂຶ້ນຢູ່ນິວຢອກໃນ ໄລຍະ ການດຳເນີນ ກອງປະຊຸມສະໄໝສາມັນປະຈຳປີຂອງສະມັດຊາໃຫຍ່ ສປຊ. ໃນປີຜ່ານມານີ້, ສປປ ລາວ ໄດ້ລົງນາມສົນທິສັນຍາໜຶ່ງສະບັບ ແລະ ຍື່ນສານ ເຂົ້າຮ່ວມເປັນພາຄີຂອງສົນທິສັນຍາ ສອງ ສະບັບໃນພິທີດັ່ງກ່າວ.